ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ໂທລະສັບ: 214013-4

ເລກທີ 5456 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 07 JUN 2023

## ໜັງສືແຈ້ງການ

**ເຖິງ** ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ** ການຕິດຕາມ ແລະ ກວດກາຜະລິດຕະພັນເຄື່ອງສຳອາງ ທີ່ຈໍລະຈອນຈຳໜ່າຍໃນ ສປປ ລາວ ທີ່ນຳເຂົ້າ ແລະ ໂຄສະນາ ໂດຍບໍ່ໄດ້ຮັບອະນຸຍາດ.

- ອີງຕາມ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງຄຸນນະພາບຜະລິດຕະພັນເຄື່ອງສຳອາງ ເລກທີ 2580/ກຊສ, ລົງວັນທີ 12 ພະຈິກ 2003;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ ເລກທີ 1494/ສທ, ລົງວັນທີ 06 ກໍລະກົດ 2016;
- ອີງຕາມ ບົດບັນທຶກກອງປະຊຸມເພື່ອປຶກສາຫາລືການລາຍງານທາງສຽງສັງຄົມກ່ຽວກັບ ຜະລິດຕະພັນເຄື່ອງສຳອາງ ເລກທີ 350/ກອຢ, ລົງວັນທີ 16 ພຶດສະພາ 2023.

ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ ທີ່ຈໍລະຈອນຈຳໜ່າຍໃນ ສປປ ລາວ ໃຫ້ມີຄວາມປອດໄພຕໍ່ກັບຜູ້ຊົມໃຊ້, ປະຈຸບັນໄດ້ມີສະພາບການນຳເຂົ້າຜະລິດຕະພັນເຄື່ອງສຳອາງ ແລະ ໂຄສະນາໂອ້ອວດສັບພະຄຸນເກີນຄວາມເປັນຈິງ ໂດຍບໍ່ໄດ້ຮັບອະນຸຍາດ ເຊິ່ງເຮັດໃຫ້ມີຄວາມສ່ຽງຕໍ່ກັບຜູ້ຊົມໃຊ້ໃນສັງຄົມ.

ເພື່ອຮັບປະກັນໃຫ້ຜະລິດຕະພັນເຄື່ອງສຳອາງທີ່ຈໍລະຈອນຈຳໜ່າຍໃນ ສປປ ລາວ ໃຫ້ມີຄຸນນະພາບ ແລະ ຮັບປະກັນຄວາມປອດໄພຕໍ່ຜູ້ຊົມໃຊ້, ກົມອາຫານ ແລະ ຢາ ຂໍແຈ້ງມາຍັງຄະນະພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຊີ້ນຳຂະແໜງອາຫານ ແລະ ຢາ ແຂວງຂອງຕົນດັ່ງລຸ່ມນີ້:

1. ສະເໜີໃຫ້ເຈົ້າໜ້າທີ່ອາຫານ ແລະ ຢາ ເອົາໃຈໃສ່ຕິດຕາມກວດກາທີ່ດ່ານນຳເຂົ້າ ແລະ ການຈໍລະຈອນຈຳໜ່າຍຜະລິດຕະພັນ ໃນກໍລະນີທີ່ພົບເຫັນການນຳເຂົ້າໂດຍບໍ່ໄດ້ຮັບອະນຸຍາດ ໃຫ້ປະຕິບັດຕາມ ມາດຕາ 16 ຂອງຂໍ້ກຳນົດວ່າດ້ວຍການຄຸ້ມຄອງຄຸນນະພາບຜະລິດຕະພັນເຄື່ອງສຳອາງ ເລກທີ 2580/ກຊສ, ລົງວັນທີ 12 ພະຈິກ 2003;
2. ຖ້າຫາກພົບເຫັນຜະລິດຕະພັນເຄື່ອງສຳອາງ ບໍ່ໄດ້ຮັບອະນຸຍາດໂຄສະນາ ແມ່ນໃຫ້ປະຕິບັດຕາມມາດຕາ 22 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ ເລກທີ 1494/ສທ, ລົງວັນທີ 06 ກໍລະກົດ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວທາວົງ